**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ** ເລກທີ 23 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 01.08.2016.

# ຄຳສັ່ງ
# ວ່າດ້ວຍການສ້າງຕັ້ງ ເທດສະບານ ແລະ ນະຄອນ

**ເຖິງ:** - ບັນດາທ່ານ ລັດຖະມົນຕີກະຊວງ ແລະ ຫົວໜ້າອົງການລັດທຽບເທົ່າກະຊວງ;
- ທ່ານ ເຈົ້າຄອງນະຄອນຫຼວງ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ (ສະບັບປັບປຸງ) ສະບັບເລກທີ 69/ສພຊ, ລົງວັນທີ 15 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ (ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 166/ພນ, ລົງວັນທີ 17 ມິຖຸນາ 2016.

ເພື່ອສ້າງຕັ້ງ ເທດສະບານ ແລະ ນະຄອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໃຫ້ປະສົບຜົນສຳເລັດເປັນຢ່າງດີ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ບັນດາ ກະຊວງ ແລະ ອົງການລັດທຽບເທົ່າກະຊວງ ດຳເນີນການຄົ້ນຄວ້າ, ປັບປຸງພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຂະແໜງການຕົນທີ່ປະຈຳຢູ່ທ້ອງຖິ່ນ ໂດຍສະເພາະແມ່ນຢູ່ຂັ້ນເມືອງຄືນໃໝ່, ໂດຍກຳນົດແຈ້ງວຽກທີ່ຄວນມອບໃຫ້ ເມືອງ, ເທດສະບານ ແລະ ນະຄອນ ຮັບຜິດຊອບ. ການກຳນົດດັ່ງກ່າວ ໃຫ້ອີງໃສ່ໜ້າວຽກຕົວຈິງທີ່ມີຢູ່ພາຍໃນ ເມືອງ, ເທດສະບານ ແລະ ນະຄອນ;
2. ໃຫ້ບັນດາແຂວງ ແລະ ນະຄອນຫຼວງ ແຕ່ງຕັ້ງຄະນະຮັບຜິດຊອບ ແລະ ດຳເນີນການຄົ້ນຄວ້າ, ກະກຽມສ້າງຕັ້ງ ເທດສະບານ ແລະ ນະຄອນ ແລ້ວສະເໜີຕໍ່ລັດຖະບານ ເພື່ອພິຈາລະນາສ້າງຕັ້ງ ໂດຍຜ່ານກະຊວງພາຍໃນ;
3. ໃຫ້ບັນດາແຂວງ ແລະ ນະຄອນຫຼວງ ສົມທົບກັບເມືອງ ຄົ້ນຄວ້າ, ກຳນົດໂຄງປະກອບກົງຈັກ ແລະ ບຸກຄະລາກອນ ໂດຍອີງໃສ່ໜ້າວຽກຕົວຈິງຂອງ ເທດສະບານ ແລະ ນະຄອນ ຈຶ່ງສ້າງກົງຈັກຂຶ້ນ, ຖ້າວຽກໃດບໍ່ຈຳເປັນກໍ່ບໍ່ໃຫ້ສ້າງຕັ້ງຂຶ້ນ ໂດຍໃຫ້ຂັ້ນແຂວງຮັບຜິດຊອບ;

4. ໃຫ້ກະຊວງການເງິນ ອອກນິຕິກຳກ່ຽວກັບການເງິນ ເທດສະບານ ແລະ ນະຄອນ ເພື່ອເຮັດໃຫ້ ເທດສະບານ ແລະ ນະຄອນ ເປັນເຈົ້າຕົນເອງທາງດ້ານການເງິນ, ມີລາຍຮັບກຸ້ມລາຍຈ່າຍ ແລະ ມີສ່ວນແຮໄວ້ເພື່ອການພັດທະນາ;

5. ໃຫ້ກະຊວງພາຍໃນ ອອກຄຳແນະນຳລະອຽດກ່ຽວກັບ ເທດສະບານ ແລະ ນະຄອນ ພ້ອມທັງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ຜ່ານການຈັດຕັ້ງປະຕິບັດຕົວຈິງ ຖ້າມີບັນຫາໃດທີ່ຫຍຸ້ງຍາກສັບສົນ ບໍ່ສາມາດດຳເນີນໄດ້ ໃຫ້ລາຍງານນາຍົກລັດຖະມົນຕີ ເພື່ອແກ້ໄຂ;

6. ໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ເກີດຜົນສຳເລັດ;

7. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ທອງລຸນ ສີສຸລິດ